ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບວັດທະນາຖາວອນ

ແຂວງຊຽງຂວາງ

ເລກທີ.....21..../ຈຂ.ຊຂ

ຊຽງຂວາງ,ວັນທີ..27./.11.../ປີ2017

# ຄຳສັ່ງ

ເຖິງ: - ບັນດາເຈົ້າເມືອງ 07 ເມືອງ ທົ່ວແຂວງ;

- ພະແນກກະສິກຳ ແລະ ປ່າໄມ້ແຂວງ;
- ພະແນກອຸດສາຫະກຳ-ການຄ້າແຂວງ;
- ພະແນກການເງິນ,ກອງບັນຊາການ ປກສແຂວງ;

ເລື່ອງ: ການຍຸບເລີກລົດຊະແລວ ແລະ ຄຸ້ມຄອງຈັກສະຕີນຕັດໄມ້ ຢູ່ພາຍໃນແຂວງ

- ອີງຕາມ, ສິດແລະໜ້າທີ່ຂອງເຈົ້າແຂວງ,ເຈົ້າຄອງນະຄອນຫຼວງ ທີ່ລະບຸໃນ ພາກທີ III,ໝວດທີ IV ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສ.ປ.ປ.ລາວ
- ອີງຕາມ, ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 415/ຫສນຍ, ລົງວັນທີ 18/8/2016 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອແກ້ໄຂຜົນການກວດກາ ການຂຸດຄົ້ນໄມ້-ທ້ອນໂຮມ ແລະ ສົ່ງອອກໄມ້ຢູ່ແຂວງຊຽງຂວາງ.
- ອີງຕາມ, ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 803/ຫສນຍ.ກສສ, ລົງວັນທີ 30/5/2017 ເລື່ອງຜົນການກວດກາ ແລະ ແກ້ໄຂ ການຂຸດຄົ້ນ,ການທ້ອນໂຮມ ແລະ ການເຄື່ອນຍ້າຍໄມ້ຢູ່ແຂວງຊຽງຂວາງ.
- ອີງຕາມ,ຜົນກອງປະຊຸມຂອງຄະນະສະເພາະກິດ ແຂວງ ແລະ ສຸມກາງຄັ້ງວັນທີ 09/11/2017 ທີ່ຫ້ອງວ່າການປົກຄອງແຂວງ

ເຈົ້າແຂວງ ອອກຄຳສັ່ງດັ່ງນີ້:

1) ໃຫ້ຍຸບເລີກບັນດາລົດຊະແລວ ໃນທົ່ວແຂວງ ແລະ ໃຫ້ຮິບໂຮມເອົາມາທ້ອນໂຮມໄວ້ຢູ່ເມືອງ ຫຼື ສະຖານທີ່ເໝາະສົມຂອງເມືອງ, ໃນນີ້ໃຫ້ແຍກໄດ້ ລົດທີ່ມີທະບຽນຖືກຕ້ອງ ແລະ ລົດທີ່ບໍ່ມີເອກະສານຫຍັງ.
2) ໃຫ້ຄຸ້ມຄອງຈັກສະຕີນໃນທົ່ວແຂວງ, ໃຫ້ເອົາມາທ້ອນໂຮມ ແລະ ເກັບໄວ້ຢູ່ຫ້ອງການການກະສິກຳ ແລະ ປ່າໄມ້ເມືອງ, ຖ້າຕ້ອງການນຳໃຊ້ ແມ່ນໄດ້ຮັບການເຫັນດີຈາກທ່ານເຈົ້າເມືອງ ພາຍຫຼັງນຳໃຊ້ສຳເລັດໃຫ້ເອົາກັບຄືນມາໄວ້ບ່ອນເກົ່າ.

3) ມອບໃຫ້ທ່ານເຈົ້າເມືອງ ຊີ້ນຳ ປກສ ເມືອງ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ປະຕິບັດການທ້ອນໂຮມລົດຊະແລວ, ຫຼັງຈາກມີຂໍ້ມູນລະອຽດ ແລ້ວໃຫ້ລາຍງານ ຂໍທິດຊີ້ນຳແກ້ໄຂຈາກແຂວງ ແລະ ມອບໃຫ້ທ່ານເຈົ້າເມືອງ ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເຈົ້າໜ້າທີ່ ປກສ ເມືອງ ຄຸ້ມຄອງຈັກສະຕິນຢ່າງເຂັ້ມງວດ.

4) ໃຫ້ພະແນກອຸດສາຫະກຳ-ການຄ້າ, ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ພະແນກ ການເງິນ, ດ່ານນ້ຳກັນ, ບັນດາຕະຫຼາດ, ຮ້ານຮ້ານຕ່າງ ບໍ່ໃຫ້ນຳເຂົ້າ ແລະ ຈຳໜ່າຍ ຈັກສະຕິນ ແລະ ອຸປະກອນຕ່າງໆ ໃນການຊຸດຄົ້ນໄມ້, ເລື່ອຍໄມ້ ແລະ ຊອຍໄມ້ທີ່ບໍ່ຖືກຕ້ອງ ຢ່າງເດັດຂາດ.

5) ຜ່ານການຈັດຕັ້ງປະຕິບັດ 4ໜ້າວຽກຂ້າງເທິງ, ຫາກມີກໍລະນີ ບຸກຄົນ ແລະ ນິຕິບຸກຄົນ ຝືນດື້, ບໍ່ໃຫ້ຄວາມຮ່ວມມື, ການນຳໃຊ້ມາດຕະການ ຕໍ່ຜູ້ທີ່ຝື້ນດື້ ແມ່ນມອບໃຫ້ເຈົ້າໜ້າທີ່ປະຕິບັດຕາມຂັ້ນຕອນຂອງຂະບວນການກົດໝາຍ

6) ໃຫ້ທຸກພາກສ່ວນກ່ຽວຂ້ອງຂອງເມືອງ, ແຂວງ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຖ້າມີບັນຫາໃດຫຍຸ້ງຍາກ ແມ່ນໃຫ້ ລາຍງານ ຄະນະສະເພາະກິດຕາມ415/ຫລນຍ ຂັ້ນແຂວງ,ສູນກາງ ແລະ ການນຳແຂວງ ຮັບຊາບ ເປັນແຕ່ລະໄລຍະ ເພື່ອຊອກຫາວິທີການແກ້ໄຂໃຫ້ທັນເວລາ.

ເຈົ້າແຂວງ

ຄຳແສນ ມະນີວົງ
Khamsene MANIVONG

ບ່ອນສົ່ງ:

1. ຫ້ອງວ່າການປົກຄອງແຂວງ 1ສະບັບ.
2. ພະແນກການເງິນແຂວງ 1ສະບັບ
3. ພະແນກກະສິກຳ ແລະ ປ່າໄມ້ ແຂວງ 1ສະບັບ
4. ພະແນກ ອຸດສາຫະກຳ-ການຄ້າແຂວງ 1ສະບັບ
5. ກອງບັນຊາການ ປກສ-ປກຊ ລະ 1ສະບັບ
6. ບັນດາຫົວໜ່ວຍ ທຸລະກິດໄມ້ ລະ 1ສະບັບ
7. ຄະນະສະເພາະກິດ 415/ຫລນຍ 1ສະບັບ
8. ສຳເນົາໄວ້ 1ສະບັບ